ສະບັບທີ 01, ຊຸດທີ 01 (2026); 118-127

ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010112



ເພີ່ມທະວີບົດບາດຊາວໜຸ່ມໃນການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

Enhancing the Youth Role in Scientific Research at National Academy of Politics and Public Administration

ວຽງພັນ ຈິດສະດີ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
E-mail: vingphanchisadee@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ:15 ຕຸລາ 2025
ຈັດພິມອອນລາຍ: 24 ມີນາ 2026

ບົດຄັດຫຍໍ້:

ຊາວໜຸ່ມເປັນກຳລັງອັນໃຫຍ່ຫຼວງ, ມີຖານະບົດບາດສຸດທີ່ສຳຄັນໃນທຸກຂົງເຂດວຽກງານເພີ່ມພູນຜະລິດຜົນ, ສູ້ຮົບ, ວິທະຍາສາດ ແລະອື່ນໆ. ໃນປະຫວັດສາດຂອງຊາດລາວ ໄດ້ຢັ້ງຢືນໄວ້ຢ່າງຈະແຈ້ງວ່າ ວິລະກຳຂອງຊາວໜຸ່ມລາວ ໃນພາລະກິດຕໍ່ສູ້ກອບກູ້ເອົາປະເທດຊາດໄດ້ຢ່າງສົມບູນ ຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນກຳລັງສືບທອດທີ່ດີ ແລະ ໄວ້ເນື້ອເຊື່ອໃຈຂອງພັກ, ເປັນກຳລັງແຮງງານຜະລິດຕົ້ນຕໍ, ແກ່ນສານຂອງສັງຄົມ, ເປັນແຂນຂວາທີ່ເອົາການເອົາງານຂອງພັກ, ທັງແມ່ນກະດູກສັນຫຼັງ ຂອງປະເທດຊາດ. ເປັນກຸ່ມຄົນທີ່ເອີ້ນວ່າ ພາກສ່ວນກ່ຽວຂ້ອງສຳຄັນ ຂອງການພັດທະນາທີ່ຍືນຍົງຂອງແຕ່ລະສັງຄົມ, ຫຼາຍໆແຜນງານ, ຍຸດທະສາດ ແລະ ເປົ້າໝາຍພັດທະນາລະດັບສາກົນ ເຊັ່ນ: “ແຜນປະຕິບັດງານສາກົນເພື່ອຊາວໜຸ່ມ (UN 2010), ວາລະການພັດທະນາແບບຍືນຍົງແຫ່ງ ສປຊ (UN 2015) ດັດສະນີການພັດທະນາຊາວໜຸ່ມອາຊຽນ (ASEAN Secrétariat 2017) ກໍ່ຖືເອົາຊາວໜຸ່ມ-ເຍົາວະຊົນ ເປັນພາກສ່ວນກ່ຽວຂ້ອງຫຼັກ ຂອງການພັດທະນາແບບຍືນຍົງເຊັ່ນກັນ”.

ສະນັ້ນ, ການເພີ່ມທະວີບົດບາດຊາວໜຸ່ມ ໃນການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນການຍົກສູງບົດບາດໃຫ້ຊາວໜຸ່ມໄດ້ມີໂອກາດ ປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດ ເພື່ອສ້າງໃຫ້ບົດບາດຂອງຊາວໜຸ່ມນັບມື້ນັບສູງເດັ່ນຂຶ້ນ, ຍົກສູງບົດບາດ ແລະ ຄວາມສາມາດ, ປຸກລະດົມຊາວໜຸ່ມເຂົ້າຮ່ວມຂະບວນການວິທະຍາສາດໃຫ້ຫຼາຍ ທັງມວນໝາຍ ແລະ ເປີດກວ້າງ ເພື່ອຊອກ ແລະ ສ້າງໄດ້ຖັນແຖວນັກວິທະຍາສາດໜຸ່ມໃນອະນາຄົດ.

ໃນໄລຍະຜ່ານມາ ຄະນະພັກ, ຄະນະນຳສະຖາບັນ ເວົ້າລວມ, ເວົ້າສະເພາະຄະນະບໍລິຫານງານຊາວໜຸ່ມສະຖາບັນ ກໍ່ໃຫ້ຄວາມສຳຄັນ ແລະ ຖືວ່າອົງການການຕັ້ງຊາວໜຸ່ມ ແມ່ນອົງການໜຶ່ງທີ່ມີຄວາມສຳຄັນ ແລະ ທຸກໆຜົນສຳເລັດ ລ້ວນແຕ່ມີການປະກອບສ່ວນຂອງຊາວໜຸ່ມ. ຜ່ານມານັ້ນ ຍ້ອນການນຳພາ-ຊີ້ນຳຢ່າງໃກ້ຊິດຂອງຄະນະນຳ ຈຶ່ງເຮັດໃຫ້ບົດບາດຂອງຊາວໜຸ່ມ ໃນການຄົ້ນຄວ້າວິທະ ຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ມີຜົນສຳເລັດໃຫຍ່ດ້ານ ເປັນຕົ້ນແມ່ນການປະກອບສ່ວນຄົ້ນຄວ້າບົດວິທະຍາສາດ, ການຂຽນບົດລົງວາລະສານ ແລະ ການຄົ້ນຄວ້າຂຶ້ນຫ້ອງສິດສອນຕ່າງໆ.

ຄຳສັບສຳຄັນ: ບົດບາດຊາວໜຸ່ມ, ການຄົ້ນຄວ້າວິທະຍາສາດ, ການຄຸ້ມຄອງ.

Abstract

Youth is a great force, playing a very important role in all areas of productivity, war, science, etc. The history of the Lao people has clearly proven that the heroic deeds of the Lao youth in the struggle for the complete recovery of the country have been proven. The Lao People's Revolutionary Youth are the good and trustworthy successors of the Party, the main productive force, the nucleus of society, the right arm that carries out the Party's work, and the backbone of the nation. As a group of people, they are called key stakeholders in the sustainable development of each society. Many international development programs, strategies and goals, such as the "International Plan of Action for Youth (UN 2010), the UN Sustainable Development Agenda (UN 2015), and the ASEAN Youth Development Index (ASEAN Secretariat 2017), also consider youth as key stakeholders in sustainable development."

Therefore, increasing the role of youth in scientific research at the National Institute of Politics and Administration is to raise the role of youth to have the opportunity to contribute to scientific research in order to create a more prominent role for young people, enhance their role and capabilities, and mobilize young people to participate in scientific processes, both assigned and expanded, in order to find and create a column of young scientists in the future. In the past, the Party Committee, the Institute's leadership in general, and the Institute's Youth Executive Committee in particular, have given importance to and considered that the youth organization is an important organization and that all achievements have the contribution of young people. In the past, due to the close leadership and guidance of the leadership, the role of young people in scientific research at the National Institute of Politics and Administration has been successful in many aspects, such as contributing to scientific research, writing articles for journals, and conducting research in various classrooms.

Key words: Youth Roles, Research, Management.

1. ເພີ່ມທະວີບົດບາດຊາວໜຸ່ມ ໃນການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

1). ພື້ນຖານທິດສະດີ ກ່ຽວກັບການຄົ້ນຄວ້າວິທະຍາສາດ.

ການຄົ້ນຄວ້າວິທະຍາສາດ “ແມ່ນການເຄື່ອນໄຫວປະດິດສ້າງ ຂອງບັນດານັກວິທະຍາສາດ ໂດຍທົ່ວໄປແມ່ນເລີ່ມຈາກປາກົດການມີແນວຄິດ ກ່ຽວກັບຫົວຂໍ້ວິທະຍາສາດ ຈາກນັ້ນກໍ່ເກີດມີການຫັນປ່ຽນແບບພິເສດໃນຈິນຕະນາການ ແລະ ສຸດທ້າຍແມ່ນການປະດິດສ້າງ” (ມັງໜໍ່ເມກ, 2014, ໜ້າ 54). ແມ່ນຮູບການເຄື່ອນໄຫວທີ່ສັບສົນ ຂອງຄົນເຮົາ, ທາດແທ້ຂອງການຄົ້ນຄວ້າ ແມ່ນການເຄື່ອນໄຫວປະດິດສ້າງ ຂອງບັນດານັກວິທະຍາສາດ ແນໃສ່ຄວາມຮັບຮູ້ໂລກ, ສ້າງເປັນລະບົບຄວາມຮັບຮູ້ທີ່ມີຄ່າ ເພື່ອນຳໃຊ້ເຂົ້າໃນການດັດແປງ ແລະ ປົກປ້ອງໂລກ. ການຄົ້ນຄວ້າວິທະຍາສາດ ມີຈຸດປະສົງຄົ້ນຄວ້າຊອກຫາທາດແທ້ ແລະ ບັນດາກົດເກນແຫ່ງການເຄື່ອນໄຫວຂອງໂລກ, ສ້າງຂໍ້ມູນ-ຂ່າວສານໃໝ່ ແນໃສ່ນຳໃຊ້ການຄົ້ນຄວ້ານັ້ນເຂົ້າໃນການຜະລິດວັດຖຸ ຫຼື ສ້າງເປັນຄຸນຄ່າທາງດ້ານຈິດໃຈ ຕອບສະໜອງຄວາມຕ້ອງການແຫ່ງການດຳລົງຊີວິດ ຂອງຄົນເຮົາ. ການຄົ້ນຄວ້າວິທະຍາສາດ ບໍ່ສະເພາະແຕ່ແນໃສ່ຮັບຮູ້ໂລກເທົ່ານັ້ນ, ຫາກຍັງດັດແປງ ແລະ ປົກປ້ອງໂລກ. ຈຸດປະສົງອັນສຸດທ້າຍຂອງການຄົ້ນຄວ້າວິທະຍາສາດ ແມ່ນເພື່ອຮັບໃຊ້ການດຳລົງຊີວິດຂອງຄົນເຮົາ; ສະນັ້ນ ການຄົ້ນຄວ້າວິທະຍາ ສາດ ຕ້ອງດຳເນີນໄປຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຢູ່ໃນທຸກຂົງເຂດວຽກງານ, ບັນດາຜົນສຳເລັດ ຂອງການຄົ້ນຄວ້າວິທະຍາສາດນັ້ນ ມັນໄດ້ປະກອບສ່ວນຢ່າງໃຫຍ່ຫຼວງ ເຂົ້າໃນສ້າງສາພັດທະນາເສດຖະກິດ, ສັງຄົມ ແລະ ໄດ້ກາຍເປັນກຳລັງແຮງສຳຄັນ ເຮັດໃຫ້ສັງຄົມມະນຸດໄດ້ມີອາມຈະເລີນກ້າວໜ້າຢ່າງບໍ່ຢຸດຢັ້ງ; ໝາຍຄວາມວ່າ ວິທະຍາສາດເຮັດໃຫ້ຄົນເຮົາມີກຳລັງແຮງອັນແຂງແກ່ນເໜືອທຳມະຊາດ, ສາມາດບັງຄັບໃຫ້ທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ຂອງຄົນເຮົາ ເພາະເປົ້າໝາຍຂອງວິທະຍາສາດ ແມ່ນບັນດາຮູບການຄິງທີ່ ທີ່ແຕກຕ່າງກັນຂອງວັດຖຸທີ່ພວມເຄື່ອນໜັງ ຕະຫຼອດຮອດຮູບແບບການສ່ອງແສງວັດຖຸເຂົ້າໃສ່ສະຕິຂອງຄົນເຮົາ ຫຼື ເວົ້າອີກແນວໜຶ່ງວ່າ ເປົ້າໝາຍຂອງວິທະຍາສາດ ແມ່ນໂລກພາວະວິໄສ, ວິທີຮັບຮູ້ໂລກພາວະວິໄສ ແລະການຫຍໍ້ເວລາໃນການໝຸນໃຊ້ມີປະສິດທິພາບ.

ການຄົ້ນຄວ້າວິທະຍາສາດ ແມ່ນການຄົ້ນຫາທາດແທ້ປາກົດການຕ່າງໆ ຂອງໂລກພາວະວິໄສ ໂດຍໄດ້ອະທິບາຍກ່ຽວກັບຕົ້ນກຳເນີດ, ຊອກເຫັນບັນດາກົດເກນແຫ່ງການເຄື່ອນໜັງ ແລະ ການຂະຫຍາຍຕົວ ຂອງປາກົດການເຫຼົ່ານັ້ນ; ຮິບໂຮມ ແລະ ສັງລວມບັນດາ

ຄວາມຮັບຮູ້ທີ່ໄດ້ຄົ້ນພົບເຂົ້າເປັນລະບົບອັນໜຶ່ງ ແລ້ວຍົກຂຶ້ນເປັນ ຫຼັກທິດສະດີ ແລະ ທິດສະດີວິທະຍາສາດ; ຄົ້ນຄວ້າ ແລະ ນຳໃຊ້ ບັນ ດາຜົນການຄົ້ນຄວ້າ, ປະດິດສ້າງວິທະຍາສາດເຂົ້າໃນຊີວິດຕົວ ຈິງ. ກຳລັງຊຸກດັນໃຫ້ມີການຄົ້ນຄວ້າວິທະຍາສາດ ແມ່ນຄວາມ ຕ້ອງການໃນຊີວິດຕົວຈິງຂອງຄົນເຮົາ. ຄວາມຕ້ອງການຊີວິດຕົວຈິງ ກໍ່ໃຫ້ເກີດຫົວຂໍ້ທີ່ຕ້ອງແກ້ໄຂ ແລະ ຫົວຂໍ້ເຫຼົ່ານັ້ນ ກໍ່ເປັນເປົ້າໝາຍ ທີ່ວິທະຍາ ສາດຕ້ອງແກ້ໄຂ. ພຶດຕິກຳຕົວຈິງ ທັງເປັນຕົ້ນກຳເນີດ ຂອງຄວາມຮູ້ ແລະ ທັງເປັນມາດຕະຖານພິສູດຄວາມຖືກຕ້ອງຊັດ ເຈນ ຂອງທິດສະດີວິທະຍາສາດ ແລະ ເປັນເປົ້າໝາຍທີ່ບັນດາທິດ ສະດີວິທະຍາສາດຕ້ອງແກ້ໄຂ.

ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກໄດ້ເນັ້ນວ່າ: “ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີເປັນກຳລັງ ແຮງອັນແຂງແກ່ນ ສຳລັບຊຸກຍູ້ກຳລັງການຜະລິດໃຫ້ຂະຫຍາຍຕົວ ດ້ວຍຜະລິດຕະພາບສູງ” (ຄະນະໂຄສະນາອົບຮົມສູນກາງພັກ, 1986, ໜ້າ 98). ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ເວົ້າ ວ່າ: “ເສີມຂະຫຍາຍປັດໄຈ ແລະ ທ່າແຮງບໍ່ມຊ້ອນຂອງຊາດ ໂດຍນຳໃຊ້ເຕັກໂນໂລຊີການສື່ສານ, ຂໍ້ມູນຂ່າວສານ (ICT) ທີ່ເໝາະ ສົມໃຫ້ກາຍເປັນໂອກາດ, ເປັນກຳລັງແຮງ ແລະ ເປັນພື້ນຖານການ ຜະລິດ ແລະ ການບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກຫຼັກແຫຼ່ງ ໃນການເຕີບໂຕ ເພື່ອສ້າງຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງ, ເພິ່ງ ຕົນເອງທາງດ້ານເສດຖະກິດເປັນກ້າວໆ” (ວາລະສານອາລຸນໃໝ່, 2021, ໜ້າ 119). ການຄົ້ນຄວ້າວິທະຍາສາດ ມີບົດບາດສຳຄັນຢ່າງ ໃຫຍ່ຫຼວງ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດ ເພາະວ່າ ການຄົ້ນຄວ້າວິທະຍາສາດ ໄດ້ປະກອບສ່ວນໃນການຊອກ ຫາວິທີການ ແລະ ຫຼັກການ ໃນການແກ້ໄຂບັນຫາທາງດ້ານ ເສດຖະກິດ-ສັງຄົມ ແລະ ຜ່ານການຄົ້ນຄວ້າວິທະຍາສາດ ໄດ້ ກາຍເປັນກຳລັງການຜະລິດໂດຍກົງຂອງສັງຄົມ ໂດຍສະເພາະແມ່ນ ການຄົ້ນຄວ້າວິທະຍາ ສາດ ຢູ່ສະຖາບັນການເມືອງ ແລະການ ປົກຄອງແຫ່ງຊາດ ໄດ້ຮັບການເອົາໃຈໃສ່ໃນການຄົ້ນຄວ້າ ເພື່ອຕອບ ແກ້ບັນຫາທາງດ້ານວິຊາການ, ຄົ້ນຄວ້າທາງດ້ານທິດສະດີ ແລະ ພຶດຕິກຳ ເພື່ອຮັບໃຊ້ເຂົ້າໃນການຊຸກຍູ້ ແລະ ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານ ຊຶ່ງພັກໄດ້ເນັ້ນ ວ່າ: “ເພີ່ມທະວີວຽກງານຄົ້ນຄວ້າທິດສະດີວິທະຍາສາດ-ສັງຄອມ ພຶດຕິກຳອັນມີຊີວິດຊີວາ ເພື່ອຍົກລະດັບຄວາມສາມາດດ້ານ ຈິນຕະນາການທິດສະດີຂອງພັກ, ປັບປຸງການນຳພາໃຫ້ຈະແຈ້ງ, ແທດຕົວຈິງ ແລະ ຮັບປະກັນຄວາມເປັນໄປໄດ້ໃນທາງປະຕິບັດ” (ວາ ລະສານອາລຸນໃໝ່, 2021, ໜ້າ 45) ແລະ ໃນແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ 2021-2025 ຄັ້ງທີ IX ໄດ້ເນັ້ນ ໜັກວ່າ ສົ່ງເສີມການຄົ້ນຄວ້າ ແລະນຳໃຊ້ຜົນການຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

ຈາກພື້ນຖານທິດສະດີ ແລະ ຄວາມໝາຍຄວາມສຳຄັນດັ່ງກ່າວ ນັ້ນ, ການຄົ້ນຄວ້າວິທະຍາສາດ ຂອງຊາວໜຸ່ມຍິ່ງມີຄວາມສຳຄັນ, ເພາະວຽກງານຊາວໜຸ່ມ ແມ່ນວິທະຍາສາດໜຶ່ງທີ່ຈຳເປັນຕ້ອງກຳໄດ້ ຈິດຕະສາດ, ຄວາມຕ້ອງການຂອງໄວໜຸ່ມ ຊຶ່ງຖ້າມີຖັນແຖວຊາວໜຸ່ມ ເປັນນັກຂຽນ ຍິ່ງຈະເຮັດໃຫ້ເຫັນແຈ້ງບັນຫາທີ່ຊາວໜຸ່ມມີຢູ່ ຈົນໃນທີ່ ສຸດສາມາດຊອກໄດ້ທິດທາງແກ້ໄຂທີ່ເໝາະສົມ ເພື່ອສ້າງທິດສະດີໃໝ່ ທີ່ມີຄຸນຄ່າ ແລະ ສາມາດນຳໃຊ້ຖືກກັບເປົ້າໝາຍ. ພ້ອມກັນນັ້ນ, ການ ຄົ້ນຄວ້າວິທະຍາສາດ ຍັງເປັນການປະກອບສ່ວນສ້າງຊາວໜຸ່ມເປັນຄົນ ສັງຄົມນິຍົມໃໝ່ ຕາມທິດທີ່ພັກ-ລັດວາງໄວ້. ດັ່ງຄຳເຫັນຂອງ ທ່ານ ສະເຫຼີມໄຊ ກົມມະສິດ ກຳມະການກົມການເມືອງສູນກາງພັກ, ຮອງ ນາຍົກລັດຖະມົນຕີ ຕໍ່ກອງປະຊຸມເຜີຍແຜ່ຜົນການຄົ້ນຄວ້າປະຈຳປີ 2024 ວ່າ “ວິທະຍາສາດ ນັບມື້ມີບົດບາດ ແລະ ມີທ່າກ້າວຂະຫຍາຍ ຕົວຄວບຄູ່ກັບການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະຍຸກ 4.0 ນັບມື້ມີບົດບາດສຳຄັນ ຕໍ່ກັບການດຳລົງຊີວິດ, ໃນການຄ້າ, ກະສິ ກຳ, ການອະນຸລັກສິ່ງແວດລ້ອມທຳມະຊາດ, ການພັດທະນາສັງຄົມ ຊຶ່ງສູນກາງພັກ ແລະ ລັດຖະບານ ໄດ້ໃຫ້ຄວາມສຳຄັນໃນການຄົ້ນຄວ້າ ວິທະ ຍາສາດຕະຫຼອດມາ, ສົ່ງເສີມໃຫ້ມີບັນດານັກຄົ້ນຄວ້າຫຼາຍຂຶ້ນ ໃນແຕ່ລະສາຂາວິຊາເປັນກ້າວໆ” (ກົມມະສິດ, 2025).

ສະນັ້ນ, ການເພີ່ມທະວີບົດບາດຊາວໜຸ່ມໃນການຄົ້ນຄວ້າວິ ທະ ຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງ ໄດ້ຮັບຄວາມເອົາໃຈໃສ່ໃນການນຳພາ-ຊີ້ນຳຈາກຄະນະພັກ, ຄະນະນຳ ທຸກຂັ້ນ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຢ່າງ ໃກ້ ຊິດ, ເຮັດໃຫ້ການເຄື່ອນໄຫວຄົ້ນຄວ້າວິທະຍາສາດມີຄວາມເຕີບ ໃຫຍ່, ເຂັ້ມແຂງ ເຮັດໃຫ້ການເຮັດບົດບາດຄົ້ນຄວ້າວິທະຍາສາດ ໄດ້ ຮັບການ ຈັດຕັ້ງປະຕິບັດຢ່າງແຂງແຮງ. ຄະນະພັກ, ຄະນະນຳສະຖາ ບັນ ໄດ້ເອົາ ໃຈໃສ່ ແລະ ຖືສຳຄັນວຽກງານການຄົ້ນຄວ້າວິທະຍາສາດ ເພື່ອປະກອບ ສ່ວນຢ່າງຕັ້ງໜ້າ ໃນການເສີມຂະຫຍາຍແນວທາງ ປ່ຽນແປງໃໝ່ ແລະ ຮັບໃຊ້ໃຫ້ແກ່ການພັດທະນາປະເທດຊາດ.

2). ສະພາບຈຸດພິເສດ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນອົງການໜຶ່ງທີ່ຂຶ້ນກັບຄະນະບໍລິຫານງານສູນກາງພັກ ແລະ ລັດຖະບານ, ຢູ່ພາຍໃຕ້ການນຳພາ-ຊີ້ນຳໂດຍກົງຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ມີຖານະທຽບເທົ່າກັບບັນດາຄະນະຕ່າງໆ ຂອງພັກຂັ້ນສູນກາງ ແລະ ກະຊວງ-ອົງການຕ່າງໆ ຂອງລັດຖະບານ, ມີພາລະບົດບາດ, ໜ້າທີ່ສຳຄັນແຖວໜ້າໃນການກໍ່ສ້າງ, ບຳລຸງພະນັກງານ, ຖືເປັນເບົ້າຫຼອມພະນັກງານຜູ້ສືບທອດພາລະກິດປະຕິວັດຂອງພັກ ທີ່ຈົງຮັກພັກດີ ແລະມີຄວາມເດັດດ່ຽວໝຽວແໜ້ນ ທາງດ້ານແນວຄິດ-ທິດສະດີ ຕໍ່ອຸດົມການປະຕິວັດຂອງພັກເຮົາ “ເປັນສູນກາງແຫ່ງການຄົ້ນຄວ້າລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອ ແລະ ປະຫວັດສາດຂອງພັກ, ຂອງຊາດ, ແນວ ທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ວິທະຍາສາດການເມືອງ-ການປົກຄອງ, ວິທະຍາສາດການນຳພາ-ຄຸ້ມຄອງ, ຮັບໃຊ້ການຮຽນ-ການສອນ” (ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, 2020, ໜ້າ 53), ສະໜອງຂໍ້ມູນວິທະຍາສາດໃຫ້ແກ່ການວາງແນວທາງ, ນະໂຍບາຍຂອງພັກ ແລະ ລັດ, ເປັນສູນກາງຂອງການບຳລຸງພະນັກງານນຳພາ-ຄຸ້ມຄອງ, ຍົກລະດັບທິດສະດີການ ເມືອງຂັ້ນກາງ, ຂັ້ນສູງ, ກໍ່ສ້າງພະນັກງານຄົ້ນຄວ້າວິທະຍາສາດທິດສະດີການເມືອງ-ການປົກຄອງ; ເປັນອົງການຈັດຕັ້ງໜຶ່ງ ທີ່ປະກອບມີລະບົບກົງຈັກການຈັດຕັ້ງ ແລະ ອົງການຈັດຕັ້ງມະຫາຊົນຢ່າງຄົບຊຸດ ຊຶ່ງໜຶ່ງໃນນັ້ນກໍ່ແມ່ນອົງການຈັດຕັ້ງຊາວໜຸ່ມ ແລະ ຄະນະບໍລິຫານງານຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ມີບົດບາດໃນການປະສານສົມທົບກັບອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນອື່ນໆ ພາຍໃນສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ໃນກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ເນັ້ນວ່າ: “ສືບຕໍ່ປັບປຸງວຽກງານຄົ້ນຄວ້າວິທະຍາສາດການເມືອງ ໃຫ້ມີຄຸນນະພາບສູງຂຶ້ນ ດ້ວຍການສຸມໃສ່ຄົ້ນຄວ້າທິດສະດີ ແລະສະຫຼຸບພຶດຕິກຳຢ່າງເລິກເຊິ່ງ ໂດຍສະເພາະແມ່ນຄົ້ນຄວ້າລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອປະຫວັດຂອງພັກ, ຂອງຊາດ ເຂົ້າໃນການວາງແນວທາງການເມືອງຂອງພັກ” (ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, 2020, ໜ້າ 63). ໂດຍເຫັນໄດ້ຄວາມສຳຄັນ ແລະຄວາມຈຳເປັນໃນການຄົ້ນຄວ້າວິທະຍາສາດ, ຄະນະພັກ, ຄະນະນຳ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ສຸມໃສ່ຍົກສູງຄຸນນະພາບການຄົ້ນຄວ້າວິທະຍາສາດ ຕິດພັນກັບການຈັດຕັ້ງປະຕິບັດບົດບາດຂອງສະຖາບັນ ມີຜົນສຳເລັດດັ່ງນີ້:

ໜຶ່ງ. ການສ້າງ, ປັບປຸງນິຕິກຳ ກ່ຽວກັບການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ: “ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານດັ່ງກ່າວ ສະພາວິທະຍາສາດສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ອອກ ແລະ ຮັບຮອງນິຕິກຳຕ່າງໆຄື: ຂໍ້ກຳນົດວ່າດ້ວຍສະພາຄູໂຮງຮຽນການເມືອງ-ການປົກຄອງແຂວງ, ນະຄອນຫຼວງ ສະບັບເລກທີ 130/ສອ, ລົງວັນທີ 24 ຕຸລາ 2019; ຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງສະພາວິທະຍາສາດສະຖາບັນ ສະບັບເລກທີ 320/ສອ, ລົງວັນທີ 25 ພະຈິກ 2021; ຂໍ້ກຳນົດວ່າດ້ວຍການຄຸ້ມຄອງການສ້າງປຶ້ມ ແລະ ເອກະສານ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສະບັບເລກທີ 10/ສອ, ລົງວັນທີ 22 ກຸມພາ 2022; ປັບປຸງໜັງສືແນະນຳວ່າດ້ວຍການຂຽນວິທະຍານິພົນ ຈົບຊັ້ນປະລິນຍາໂທສະບັບເລກທີ 050/ສອ, ລົງວັນທີ 10 ພຶດສະພາ 2022; ຂໍ້ກຳນົດວ່າດ້ວຍການຄຸ້ມຄອງການຄົ້ນຄວ້າວິທະຍາສາດຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ໜັງສືແນະນຳ ວ່າດ້ວຍການຂຽນອາລະສານວິທະຍາສາດ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສະບັບເລກທີ 306/ ສອ, ລົງວັນທີ 16 ພະຈິກ 2023; ປັບປຸງຂໍ້ກຳນົດ ວ່າດ້ວຍການນຳໃຊ້ງົບປະມານໃນການຂຽນປຶ້ມ-ຂຽນບົດວິທະ ຍາສາດ ຊຶ່ງນິຕິກຳຕ່າງໆພາຍໃນສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ລ້ວນແຕ່ເປັນເອກະພາບໄປຕາມການຊີ້ນຳໂດຍກົງຂອງກົມການເມືອງສູນກາງພັກ ແລະ ພາກສ່ວນກ່ຽວຂ້ອງ.

ສອງ. ການພັດທະນາບຸກຄະລາກອນດ້ານການຄົ້ນຄວ້າວິທະຍາສາດຂອງຊາວໜຸ່ມ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ: ໃນໄລຍະຜ່ານມາ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ເອົາໃຈໃສ່ຊຸກຍູ້, ສົ່ງເສີມກໍ່ສ້າງ-ບຳລຸງພະນັກງານ, ຄູ-ອາຈານ ໃຫ້ມີຄວາມຮູ້, ຄວາມສາມາດໃນລະດັບທີ່ແນ່ນອນ ເພື່ອຕອບສະ ໜອງໃຫ້ແກ່ວຽກງານວິຊາສະເພາະ, ການຮຽນ-ການສອນ ເວົ້າລວມ, ເວົ້າສະເພາະແມ່ນການເພີ່ມທະວີບົດບາດ ຂອງສະມາຊິກຊາວໜຸ່ມໃນການຄົ້ນຄວ້າວິທະຍາສາດ ໃຫ້ນັບມື້ນັບຫຼາຍຂຶ້ນ.

3). ສະພາບຈຸດພິເສດ ຂອງຊາວໜຸ່ມ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ຊາວໜຸ່ມເປັນກຳລັງອັນໃຫຍ່ຫຼວງ, ມີຖານະບົດບາດສຸດທີ່ສຳຄັນ ໃນທຸກຂົງເຂດວຽກງານເພີ່ມພູນຜະລິດຜົນ, ສູ້ຮົບ, ວິທະຍາສາດ ແລະອື່ນໆ. ໃນປະຫວັດສາດຂອງຊາດລາວ ໄດ້ຢັ້ງຢືນໄວ້ຢ່າງຈະແຈ້ງວ່າ ວິລະກຳຂອງຊາວໜຸ່ມລາວ ໃນພາລະກິດຕໍ່ສູ້ກອບກູ້ເອົາປະເທດຊາດໄດ້ຢ່າງສົມບູນ, ຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນກຳລັງສືບທອດທີ່ດີ ແລະ ໄວ້ເນື້ອເຊື່ອໃຈຂອງພັກປະຊາຊົນປະຕິວັດລາວ, ເປັນກຳລັງແຮງງານຜະລິດຕົ້ນຕໍແກ່ນສານຂອງສັງຄົມ, ເປັນແຂນຂາທີ່ເອົາການເອົາງານຂອງພັກ, ທັງແມ່ນກະດູກສັນຫຼັງ ຂອງປະ ເທດຊາດ. ປະທານ ໂຮ່ຈີມິນ ໄດ້ເວົ້າວ່າ: “ຊາວໜຸ່ມປຽບເໝືອນລະດູບານໃໝ່ ດອກໄມ້ພວມເບັ່ງບານ, ເດືອນພວມເຕັມດວງ ແລະ ນິກແອ່ນ ພວມບິນເຈີດເຈື້ຍໄປມາຕາມທ້ອງຟ້າສີຄາມ” (ໂຮ່ຈີມິນ, 2006, ໜ້າ 55).

ໃນທຸກສະໄໝ, ບໍ່ວ່າຊາດໃດ, ບໍ່ວ່າຢູ່ປະເທດໃດ, ຊາວໜຸ່ມກໍ່ເປັນກຳລັງໃຫຍ່ຫຼວງ ແລະ ເຂັ້ມແຂງກວ່າເພິ່ນໝົດ, ດັ່ງນັ້ນ ຈຶ່ງເປັນຜູ້ແບກຫາບໜັກທີ່ສຸດກວ່າເພິ່ນ ໃນໜ້າທີ່ປະຫວັດສາດຂອງຊາດນັ້ນ, ຂອງສະໄໝນັ້ນ. ມາໃນສະໄໝນີ້ ຍ້ອນມີພັກນຳພາ ບົດບາດຂອງຊາວໜຸ່ມ ມັນພັດຍິ່ງເພີ່ມທະວີຂຶ້ນຢ່າງກ້າວກະໂດດ ໝາຍຄວາມວ່າ ສະມາຊິກຊາວໜຸ່ມບໍ່ພຽງແຕ່ເຮັດຫຼອນໜ້າທີ່ຂອງຕົນຜູ້ດຽວເທົ່ານັ້ນ, ແຕ່ພວກເຮົາຕ້ອງມີໜ້າທີ່ເພື່ອເປັນຫົວຈັກຫຼັກແຫຼ່ງ ນຳພາ, ຊຸກຍູ້, ຊັກຊວນ ແລະ ນຳພາຜູ້ອື່ນ ໃຫ້ເຮັດຫຼອນໜ້າທີ່ ທີ່ການປະຕິວັດມອບໝາຍໃຫ້ ຊຶ່ງປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ “ບົດບາດປະຫວັດສາດຂອງສະມາຊິກຊາວໜຸ່ມ ແມ່ນໜັກໜ່ວງ ແລະ ສຳຄັນທີ່ສຸດ, ແຕ່ພ້ອມກັນນັ້ນ ກໍ່ມີກຽດສະຫງ່າງາມທີ່ສຸດ ເພາະວ່າຊາວໜຸ່ມໃນປັດຈຸບັນ ບໍ່ພຽງແຕ່ເຮັດໜ້າທີ່ຕໍ່ຊາດ, ມັນຍັງມີໜ້າທີ່ຕໍ່ສາກົນອີກດ້ວຍ” (ພົມວິຫານ, n.d., ໜ້າ 17). ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ການສ້າງສາພັດທະນາປະເທດຊາດ ພວມຮຽກຮ້ອງຄວາມຟົດຟື້ນປະຕິວັດ, ມັນສະໜອງອັນປອດໂປ່ງ ແລະ ລຳແຂນອັນລ້ຳສັນຂອງໄວໜຸ່ມ” (ພົມວິຫານ, 1983, ໜ້າ 31). ໃນທຸກໄລຍະປະຫວັດສາດ ຂອງສັງຄົມມະນຸດ ຊາວໜຸ່ມມີບົດບາດສຳຄັນ ເພາະວ່າຊາວໜຸ່ມທັງເປັນກຳລັງການຜະລິດຕົ້ນຕໍ, ທັງແມ່ນຜູ້ສືບທອດມໍລະດົກຂອງຄົນຮຸ່ນກ່ອນ ຊາວໜຸ່ມຈຶ່ງຖືກຂະໜານນາມວ່າ: “ຊາວໜຸ່ມເປັນກະດູກສັນຫຼັງຂອງຊາດ”. ສະນັ້ນ, ໃນໄລຍະຜ່ານມາ ຄະນະພັກ, ຄະນະນຳສະຖາບັນ ຈຶ່ງໄດ້ໃຫ້ຄວາມສຳຄັນ ຕໍ່ກັບວຽກງານຊາວໜຸ່ມ ມາໂດຍຕະຫຼອດ.

ໂຄງປະກອບບຸກຄະລາກອນ ຄະນະຊາວໜຸ່ມ ສມປຊ ແລະ ສະມາຊິກ ມີການເພີ່ມຂຶ້ນ ແລະ ຫຼຸດລົງ ຕາມແຕ່ລະໄລຍະ ໂດຍສະເພາະແມ່ນຂົງເຂດນັກສຶກສາທີ່ເຂົ້າຮຽນໃໝ່, ຈົບການສຶກສາ ແລະ ຂົງເຂດພະນັກງານ, ຄູ-ອາຈານ ທີ່ຍົກຍ້າຍບ່ອນປະຈຳການ, ໄປຄົ້ນຄວ້າຮ່ຳຮຽນຢູ່ພາຍໃນ ແລະ ຕ່າງປະເທດ, ຄະນະບໍລິຫານງານ ຊຶ່ງໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ ຄັ້ງທີ IV ປະກອບມີ 7 ສະຫາຍ, ຍິງ 3 ສະຫາຍ, ເລຂາ 1 ສະຫາຍ ເປັນກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຮອງເລຂາ 2 ສະຫາຍ, ຍິງ 1 ສະຫາຍ, ຄະນະ 4 ສະຫາຍ, ຍິງ 2 ສະຫາຍ ແລະ ປະກອບມີປະທານ ແລະ ຮອງປະທານກອດກາ, ປັດຈຸບັນມີໜ້າຕົວຈິງ 5 ສະຫາຍ, ຍິງ 2 ສະຫາຍ, ໄປຄົ້ນຄວ້າຮ່ຳຮຽນຕ່ຳ 2 ສະຫາຍ, ຍິງ 1 ສະຫາຍ. ນັບແຕ່ປີ 2019 ເປັນຕົ້ນມາ ມີສະມາຊິກທັງໝົດ 1,062 ສະຫາຍ, ຍິງ 330 ສະຫາຍ, ນັກສຶກສາ 937 ສະຫາຍ, ຍິງ 269 ສະຫາຍ. “ມາຮອດກອງປະຊຸມໃຫຍ່ ຄັ້ງທີ V ຂອງຄະນະຊາວໜຸ່ມ ສມປຊ ຍ້ອນເຫັນໄດ້ເຖິງຄວາມສຳຄັນ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງຊາວໜຸ່ມ ຊຶ່ງຄະນະບໍລິຫານງານຊາວໜຸ່ມ ໄດ້ເພີ່ມຈາກ 7 ສະຫາຍ ມາເປັນ 9 ສະຫາຍ, ຍິງ 4 ສະຫາຍ, ມີເລຂາ ແລະ ຮອງເລຂາ 2 ສະຫາຍ, ມີສະມາຊິກຊາວໜຸ່ມທັງໝົດ 276 ສະຫາຍ, ຍິງ 104 ສະຫາຍ ໃນນັ້ນນັກສຶກສາ 151 ສະຫາຍ, ຍິງ 43 ສະຫາຍ”(ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຄັ້ງທີ V, 2024, ໜ້າ 3).

ດ້ວຍມູນເຊື້ອສາມັກຄີເປັນເອກະພາບພາຍໃນ ຂອງຄະນະຊາວໜຸ່ມ, ສະມະຊິກຊາວໜຸ່ມ ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ ເວົ້າລວມ, ເວົ້າສະເພາະ ແມ່ນຄະນະບໍລິຫານງານພັກສະຖາບັນ ດ້ວຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກປະກອບກັບບົດຮຽນອັນປະເສີດ, ລ້ຳຄ່າທີ່ຖອດຖອນໄດ້ໃນຊຸມປີຜ່ານມາ ພວກເຮົາມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ: ພວກເຮົາຈະສາມາດຜ່ານຜ່າທຸກອຸປະສັກ, ຕາມຄຳຂວັນທີ່ວ່າ: ບ່ອນໃດຍາກ ຊາວໜຸ່ມບຸກ, ບ່ອນໃດທຸກ ຊາວໜຸ່ມຜ່ານຜ່າ, ບ່ອນໃດຊາດຕ້ອງການຊາວໜຸ່ມຂານອາສາ; ພ້ອມກັນຈັດຕັ້ງປະຕິບັດຕາມຄຳສັ່ງສອນ ຂອງປະທານ ໄກສອນ ພົມວິຫານ ທີ່ວ່າ: “ຊາວໜຸ່ມຈົ່ງເປັນດັ່ງນົກອິນຊີທີ່ບໍ່ຫວັ່ນກົວຕໍ່ພາຍຸລົມແດງ ຈົ່ງກາຍເປັນສິນໄຊຂອງຍຸກສະໄໝຂອງພວກເຮົາ” (ພົມວິຫານ, 1983, ໜ້າ 29). ຄວາມຫຍຸ້ງຍາກ ແລະ ສິ່ງທ້ົດສອບທ້າທາຍນາໆປະການ ຈະໄດ້ຮັບໄຊຊະນະບົນເສັ້ນທາງກ້າວຂຶ້ນບັນລຸເປົ້າໝາຍທີ່ວາງໄວ້ຢ່າງແນ່ນອນ.

ໃນໄລຍະຜ່ານມາ, ຄະນະພັກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຢືນຢັນວ່າ: ອົງການຈັດຕັ້ງຊາວໜຸ່ມ ແມ່ນພາກ

ສ່ວນໜຶ່ງທີ່ຂາດບໍ່ໄດ້ໃນລະບົບການເມືອງຂອງ ສມປຊ. ດ້ວຍເຫດ ນັ້ນ, ຄະນະບໍລິຫານງານພັກ ສມປຊ ກໍ່ຄືອົງການຈັດຕັ້ງພັກ ແລະ ລັດແຕ່ລະຂັ້ນຢູ່ ສມປຊ ຈຶ່ງໄດ້ນຳພາ-ຊີ້ນຳ ແລະ ອຳນວຍຄວບຄຸມ ຢ່າງໃກ້ຊິດ ແລະ ສ້າງເງື່ອນໄຂທີ່ຈຳເປັນໃຫ້ແກ່ອົງການຈັດຕັ້ງຊາວ ໜຸ່ມ ໄດ້ເສີມຂະຫຍາຍບົດບາດຂອງຕົນ ໃນທຸກການເຄື່ອນໄຫວ ຕາມທິດຂອງປະທານ ໄກສອນ ພົມວິຫານ ທີ່ວ່າ: “ສ້າງຈິດໃຈ ສະເໜີຫາຄວາມກ້າວໜ້າ, ມັກຮໍ່າຮຽນ, ຮັກວິທະຍາສາດ, ຕັ້ງໜ້າ ປະຕິວັດ, ຈຸບຈ້າວຫ້າວຫັນນຳການຄົ້ນຄິດປະດິດສ້າງ, ຕ້ານແນວ ຄິດຮັກສາເດີມ, ມັກສະຫງົບ, ມັກງ່າຍ, ຄ້ານຮຽນ, ຕ້ານຄວາມເຊື່ອ ຖືງົມ ງວາຍ” (ພົມວິຫານ, 1987, ໜ້າ 60) ແລະ ວິໄສທັດ ຂອງ ການນຳສະຖາບັນ ທີ່ວ່າ: “ອ່ານໃຫ້ຫຼາຍ ຄົ້ນຄວ້າໃຫ້ເລິກເຊິ່ງ” ຊຶ່ງ ທິດນຳດັ່ງກ່າວນັ້ນ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໄດ້ຄົ້ນຄວ້າຜັນ ຂະຫຍາຍອອກເປັນນິຕິກຳ ແລະ ລະບຽບການຕ່າງໆ ເພື່ອສົ່ງເສີມ ຊຸກຍູ້ການຄົ້ນຄວ້າວິທະຍາສາດ ເຊັ່ນ: ໄດ້ບັນຈຸສັບຊ້ອນເນື້ອໃນ ການຄົ້ນຄວ້າບົດວິທະຍາສາດເຂົ້າໃນບົດແນະນຳ 4 ບຸກ ຂອງຊາວ ໜຸ່ ມ ສມປຊ ສະບັບເລກທີ 182/ສມປຊ-ຊໜ, ລົງວັນທີ 27/11/2019; ໃນນັ້ນ ໄດ້ກຳນົດເນື້ອໃນມາດຖານດ້ານການຝຶກຝົນ ຫຼໍ່ຫຼອມ, ຂໍ້ 5, ໜ້າ 3 ວ່າ: ຕັ້ງໜ້າເຂົ້າຮ່ວມຂະບວນການຄົ້ນຄວ້າ ວິທະຍາສາດທີ່ຄະນະ ຫຼື ສະຖາບັນມອບໝາຍໃຫ້ຢ່າງຕັ້ງໜ້າ ແລະ ມີຜົນສຳເລັດເປັນຢ່າງດີ ແລະ ບັນຈຸເຂົ້າໃນເນື້ອໃນຂໍ້ແຂ່ງຂັນ ຄູ ສອນດີ-ສອນເກັ່ງ ປະຈຳປີ ຂອງ ສມປຊ, ໃນນັ້ນ ໄດ້ວາງເງື່ອນໄຂໄວ້ ວ່າ ຄູສອນດີ-ສອນເກັ່ງ ນອກຈາກບັນລຸຊົ່ວໂມງສອນແລ້ວ ຕ້ອງມີ ບົດວິທະຍາສາດ ຫຼື ບົດຂຽນລົງວາລະສານ; ນອກນັ້ນ ແມ່ນການ ມອບໝາຍຈາກຂັ້ນເທິງ ແລະ ຜ່ານການນຳສະເໜີ ຂອງຄະນະ ບໍລິຫານງານຊາວໜຸ່ມ ສມປຊ ໃນການຂຶ້ນແຜນເຄື່ອນໄຫວປະຈຳປີ.

ເຮັດໃຫ້ສະມາຊິກຊາວໜຸ່ມໄດ້ມີບົດບາດ ໃນການຄົ້ນຄວ້າ ວິທະຍາສາດ ນັບມື້ນັບຫຼາຍຂຶ້ນ ສະແດງອອກໃນການເຂົ້າຮ່ວມຂະ ບວນການຄົ້ນຄວ້າລວມ ຂອງສະຖາບັນ ນັບຕັ້ງແຕ່ການເປັນເສນາທິ ການ, ການປະກອບເປັນກົງຈັກບຸກຄະລາກອນໃນສະພາວິທະຍາ ສາດ, ນຳໜ້າໃນການຄົ້ນຄວ້າສຶກສາດ້ວຍຕົນເອງ ສະແດງຄວາມຮັບ ຮູ້ເຂົ້າໃຈ, ວິເຄາະວິໄຈບັນຫາ ສະແດງທັດສະນະຕົນຜ່ານບົດຂຽນ ໃນຮູບແບບຕ່າງໆເຊັ່ນ: ວາລະສານ, ຂຽນປຶ້ມຕຳລາ, ແນະນຳບົດ ປ້ອງກັນຈົບຊັ້ນຮຸ່ນຕ່າງໆ, ຄົ້ນຄວ້າຂີດຂຽນຫົວຂໍ້ທີ່ຖືກມອບໝາຍ ທັງພາຍໃນ ແລະ ຕ່າງປະເທດ ໂດຍທັງໝົດນັ້ນແມ່ນອີງໃສ່ຈຸດ ພິເສດ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຊຶ່ງ ເປັນສະຖາບັນການສຶກສາຂັ້ນສູງ, ເປັນໂຮງຮຽນທິດສະດີ ແລະ ພຶດຕິກຳທາງການເມືອງ-ການປົກຄອງ, ການພັດທະນາຄຸນແຖວ ພະນັກງານ ໂດຍສະເພາະພະນັກງານສືບທອດ ຈຶ່ງຕ້ອງຮັບປະກັນ ລັກສະນະຮອບດ້ານ, ເອົາໃຈໃສ່ຄົ້ນຄວ້າຮໍ່າຮຽນກຳແໜ້ນທິດສະດີ ມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງນະໂຍບາຍຂອງ ພັກ-ລັດ ທີ່ວາງອອກໃນແຕ່ລະໄລຍະ ໃຫ້ເລິກເຊິ່ງ, ຄຳເວົ້າຕ້ອງຄຽງຄູ່ ກັບການກະທຳ.

ໃນບົດໂອ້ລົມ ຂອງສະຫາຍ ມອນໄຊ ລາວມົວຊິງ ຕໍ່ກອງປະ ຊຸມໃຫຍ່ ສະມາຊິກຊາວໜຸ່ມສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ ຄັ້ງທີ V ທີ່ວ່າ: “ເມື່ອເວົ້າເຖິງຊາວໜຸ່ມ ແມ່ນເວົ້າເຖິງອະນາ ຄົດ ຂອງປະເທດຊາດ, ເວົ້າເຖິງຊາວໜຸ່ມສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນເວົ້າເຖິງອະນາຄົດ ຂອງສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ ນັ້ນກໍ່ໝາຍຄວາມວ່າ ສະຖາບັນ ຕ້ອງເອົາໃຈໃສ່ໃນການຄົ້ນຄວ້າວິທະຍາສາດ ສັງລວມທິດສະດີ ແລະ ສະຫຼຸບພຶດຕິກຳໃຫ້ຫຼາຍ ເພື່ອຈະເປັນກຳລັງທີ່ສຳຄັນ ຂອງສະຖາບັນ ໃນອະນາຄົດ” (ລາວມົວຊິງ, 2024). ໃນຕໍ່ໜ້ານີ້ ການຄົ້ນຄວ້າ ວິທະຍາ ສາດ ຕ້ອງຕິດພັນກັບການຜັນຂະຫຍາຍມະຕິຂອງພັກ, ຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ກ່ຽວກັບການພັດທະນາ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ໝາຍຄວາມວ່າ: ເພື່ອຢັ້ງຢືນຕົນ ເອງນອກຈາກຄວາມຮັບຮູ້ເຂົ້າໃຈທາງດ້ານທິດສະດີແລ້ວ, ພະນັກງານ, ຄູ-ອາຈານໜຸ່ມ ຍັງຕ້ອງຕັ້ງໜ້າຄົ້ນຄວ້າຮໍ່າຮຽນ, ຄົ້ນຄວ້າວິທະຍາສາດ ເພື່ອຮອງຮັບໜ້າທີ່ການເມືອງຂອງ ສມປຊ ໃນປັດຈຸບັນ ກໍ່ຄື ອະນາຄົດ. ສະນັ້ນ, ຄະນະພັກ, ຄະນະນຳສະຖາບັນ ເວົ້າລວມ, ເວົ້າ ສະເພາະແມ່ນ ຄະນະບໍລິງານຊາວໜຸ່ມ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ສະມາຊິກຊາວໜຸ່ມ ໃນການຄົ້ນ ຄວ້າວິທະຍາສາດ ດ້ວຍຫຼາກຫຼາຍ ວິທີ ແລະ ຮູບການ ດັ່ງຄຳເວົ້າທີ່ວ່າ: “ມີແຕ່ເອົາການຄົ້ນຄວ້າ ວິທະຍາສາດການເມືອງ-ການປົກຄອງ ຕິດພັນກັບການສຶກສອນ ແລະ ຮໍ່າຮຽນໃຫ້ແໜ້ນເທົ່ານັ້ນ ຈຶ່ງເຮັດໃຫ້ຄຸນແຖວນັກວິທະຍາສາດເຕີບ ໃຫຍ່ຂະຫຍາຍຕົວຂຶ້ນ, ເຮັດໃຫ້ການຮຽນ-ການສອນ ມີຊີວິດຊີວາ, ພຶດຕິກຳແໜ້ນກັບທິດສະດີ” (ສະຖາບັນການເມືອງ ແລະ ການ ປົກຄອງແຫ່ງຊາດ, 2005, ໜ້າ 21).

ໃນສະພາບແວດລ້ອມ ຂອງສະຫັດສະວັດການປະຕິວັດເຕັກ ໂນໂລຊີຂໍ້ມູນຂ່າວສານໄຮ້ພົມແດນ ເປັນສະຕະວັດແຫ່ງການຄິດຄົ້ນ ແລະໝູນໃຊ້ຜົນສຳເລັດ ຂອງການຄົ້ນຄວ້າວິທະຍາສາດ, ພວກເຮົາ ສາມາດຮັບຮູ້ໄດ້ເຖິງການປ່ຽນແປງໃໝ່ໄປໃນທ່າທີ່ສະດວກຂຶ້ນ, ພົ້ນ ເດັ່ນແມ່ນການຂະຫຍາຍຕົວ ຂອງວິທະຍາສາດເຕັກໂນໂລຊີ ເຮັດໃຫ້ ຂໍ້ມູນຂ່າວສານ ປາສະຈາກພົມແດນ, ທຸກຂໍ້ມູນທົ່ວທຸກມຸມໂລກ

ສາມາດເຊື່ອມໂຍງເຂົ້າກັນໄດ້ດ້ວຍເວລາອັນວ່ອງໄວ ໂດຍບໍ່ຈຳເປັນຕ້ອງເດີນ ທາງ ຫຼື ໃຊ້ເວລາຍາວນານຄືເມື່ອກ່ອນ ຊຶ່ງເປັນການປະກອບສ່ວນຢ່າງໃຫຍ່ຫຼວງ ເຂົ້າໃນການຫັນປ່ຽນໂສມໜ້າຂອງໂລກ, ຫັນປ່ຽນຄວາມຮັບຮູ້ ແລະ ວິທີການ ເພື່ອເພີ່ມສະມັດຕະພາບຂອງການຜະລິດ ລວມໄປເຖິງທຸກຂົງເຂດວຽກງານ. ເພື່ອຢາກໝູນໃຊ້ຄວາມທັນສະໄໝໃຫ້ເກີດປະໂຫຍດສູງສຸດນັ້ນ ຈຳເປັນຕ້ອງມີການສຶກສາຮ່ຳຮຽນ ແລະຄົ້ນຄວ້າ, ແຕ່ໃນການຄົ້ນຄວ້ານັ້ນ ຕ້ອງຮັບປະກັນລັກສະນະພາວະວິໄສ, ຖືກຕ້ອງຕາມແນວທາງ, ບົນພື້ນຖານລະບຽບກົດໝາຍຂອງລະບອບ ເພື່ອຮັບໃຊ້ຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ ຊຶ່ງປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະວ່າ: “ພະນັກງານ, ສະມາຊິກພັກ ບໍ່ພຽງແຕ່ຕ້ອງອອກແຮງຮ່ຳຮຽນຍົກລະດັບທິດສະດີມາກ-ເລນິນ, ແນວທາງນະໂຍບາຍຂອງພັກ, ຫາກຍັງຕ້ອງເຊີດຊູລະດັບວັດທະນະທຳ ແລະ ວິຊາສະເພາະ, ວິທະຍາສາດ, ເຕັກນິກ, ເວລາໃດກໍ່ເປັນແບບຢ່າງ ແລະ ຕະລຸມບອນໃນການປະຕິບັດໜ້າທີ່” (ພົມວິຫານ, 1985, ໜ້າ 171).

ຈາກບັນດານິຕິກຳຂ້າງເທິງນັ້ນ ໄດ້ເປັນອັນຊຸກຍູ້ໃຫ້ສະມາຊິກຊາວໜຸ່ມ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ອອກແຮງແຂ່ງຂັນກັນສ້າງຜົນງານ ຊຶ່ງພຶດຕິກຳການເຄື່ອນໄຫວຜ່ານມາສະມາຊິກອົງການຈັດຕັ້ງຊາວໜຸ່ມ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຄົ້ນຄວ້າວິທະຍາສາດເປັນຕົ້ນ: ການຂຽນບົດວິທະຍາສາດ, ການຄົ້ນຄວ້າຂຽນຫຼັກສູດ, ປຶ້ມຕຳລາສອນ, ການຂຽນບົດອາລະສານ ແລະ ໄດ້ມີຜົນສຳເລັດຈຳນວນໜຶ່ງດັ່ງນີ້:

ໜຶ່ງ, ຜົນສຳເລັດໃນການຄົ້ນຄວ້າຫົວຂໍ້ວິທະຍາສາດ.

ກ. ການຂຽນບົດຄົ້ນຄວ້າວິທະຍາສາດ.

ນັບແຕ່ປີ 2019-ປັດຈຸບັນ ສະມາຊິກຊາວໜຸ່ມໄດ້ເອົາໃຈໃສ່ປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດ, ການຄົ້ນຄວ້າທິດສະດີ ແລະ ສ້າງຜົນງານດ້ານວິທະຍາສາດ ຮັບໃຊ້ການຮຽນ-ການສອນ, ການປັບປຸງບູລະນະແນວທາງຂອງພັກໃຫ້ບໍລິບູນຂຶ້ນຕື່ມ ປະກອບສ່ວນປົກປ້ອງຄວາມຜ່ອງໃສ ຂອງລັດທິມາກ-ເລນິນ ແລະ ຄວາມຖືກຕ້ອງຂອງແນວທາງ, ແຜນນະໂຍບາຍຂອງພັກເຮົາ ອັນທີ່ພື້ນເດັ່ນແມ່ນການຄົ້ນຄວ້າວິທະຍາສາດ ຢູ່ພາຍໃນສະຖາບັນ “ສຳເລັດຈຳນວນ 80 ຫົວຂໍ້ຍ່ອຍ; ການຄົ້ນຄວ້າສະເພາະວຽກງານຊາວໜຸ່ມ ນັບທັງຮ່ວມກັບສູນກາງຊາວໜຸ່ມ ລວມທັງໝົດ 3 ຫົວຂໍ້ໃຫຍ່, ມີຈຳນວນ 15 ຫົວຂໍ້ຍ່ອຍ” (ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຄັ້ງທີ V, 2024, ໜ້າ 4). ນອກຈາກນັ້ນ ສະມາຊິກຊາວໜຸ່ມຍັງໄດ້ປະກອບສ່ວນຂຽນຫົວຂໍ້ຕ່າງໆ ໃນຂົງເຂດວຽກງານອື່ນໆສຳເລັດ 18 ຫົວຂໍ້ຍ່ອຍ; ການຄົ້ນຄວ້າວິທະຍາສາດ ຕາມຫົວຂໍ້ສະເພາະແຕ່ລະຄະນະພວມດຳເນີນການສຳມະນາ ແລະ ປັບປຸງ, ສະມາຊິກຊາວໜຸ່ມປະກອບສ່ວນຄົ້ນຄວ້າ 22 ຫົວຂໍ້ຍ່ອຍ.

ຂ. ການຂຽນບົດລົງອາລະສານ ແລະອື່ນໆ.

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ໃຫ້ຄວາມສຳຄັນໃນການໂຄສະນາ ແລະ ສະໜອງຂໍ້ມູນ-ຂ່າວສານ ໜຶ່ງໃນນັ້ນແມ່ນຜ່ານທາງສື່ສິ່ງພິມທີ່ເປັນຮູບແບບອາລະສານ ຊຶ່ງແມ່ນອາລະສານຄົ້ນຄວ້າຂອງສະຖາບັນ ມີຊື່ເອີ້ນວ່າ ອາລະສານ ທິດສະດີການເມືອງ-ການປົກຄອງ ຊຶ່ງເປັນເວທີໂຄສະນາເຜີຍແຜ່ໝາກຜົນ ຂອງການຄົ້ນຄວ້າທິດສະດີ-ພຶດຕິກຳ ຮັບໃຊ້ໃຫ້ແກ່ການຈັດຕັ້ງຜັນຂະຫຍາຍແນວທາງແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດໃນແຕ່ລະໄລຍະ, ທັງເປັນການເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດ ຂອງນັກວິທະຍາສາດ, ຄູ-ອາຈານ ແລະ ນັກສຶກສາລະບົບປະລິນຍາໂທ ຢູ່ພາຍໃນ ແລະ ນອກສະຖາບັນ, ສະໜອງຂໍ້ມູນບາງບັນຫາ ກ່ຽວກັບທິດສະດີ ແລະ ພຶດຕິກຳການເມືອງ ຂອງຕ່າງປະເທດ, ປະກອບສ່ວນສະໜອງຂໍ້ມູນໃຫ້ນັກຄົ້ນຄວ້າ, ການສິດສອນຂອງຄູ-ອາຈານ ຊຶ່ງໃນໄລ ຍະຜ່ານມາ ສະມາຊິກຊາວໜຸ່ມໄດ້ສະແດງຄວາມຮັບຮູ້ເຂົ້າໃຈ ແລະການໝູນໃຊ້ລັດທິມາກ-ເລນິນ ກໍ່ຄືການຄົ້ນຄວ້າສັງລວມບັນຫາທີ່ສັງຄົມສົນໃຈ.

ໃນໄລຍະຜ່ານມາ ໂດຍສະເພາະນັບແຕ່ປີ 2019 ມາເຖິງປັດຈຸບັນ ພະນັກງານ, ຄູ-ອາຈານ ທີ່ເປັນສະມາຊິກຊາວໜຸ່ມ ໄດ້ຂຽນບົດລົງອາລະສານຕ່າງໆ ທັງໝົດ ຈຳນວນ 117 ບົດ, ຂຽນບົດສຶກສາໂຄງການໄດ້ 16 ບົດ; ຂຽນບົດຂ່າວລົງໜັງສືພິມ ຈຳນວນ 28 ບົດ. ພິເສດແມ່ນໄດ້ບົດອາລະສານສົ່ງໄປແຂ່ງຂັນ ຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງໄດ້ສົ່ງບົດໄປແຂ່ງຂັນເນື່ອງໃນໂອກາດວັນສ້າງຕັ້ງອາລະສານກໍ່ສ້າງພັກຄົບຮອບ 30 ປີ ໃນຫົວຂໍ້ “ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບການກໍ່ສ້າງ-ບຳລຸງພະນັກງານນຳພາຄຸ້ມຄອງ” ສາມາດຍາດໄດ້ລາງວັນທີ 2 ແລະ ສົ່ງໄປແຂ່ງຂັນ ຢູ່ ສສ. ຫວຽດນາມ ສາມາດຍາດໄດ້ລາງວັນ ຈາກ ສສ. ຫວຽດນາມ 3 ລາງວັນ.

ຄ. ການຂຶ້ນຫ້ອງສິດສອນ, ປັບປຸງຫຼັກສູດການຮຽນ-ການສອນ.

ຜ່ານການຄົ້ນຄວ້າວິທະຍາສາດ ຂອງພະນັກງານ, ຄູ-ອາຈານ ໃນໄລຍະທີ່ຜ່ານມານັ້ນ ເຫັນວ່າ ມີຫຼາຍຫົວຂໍ້ທີ່ແຕກຕ່າງກັນ ຮັບໃຊ້ໃນຫຼາຍຂົງເຂດວຽກງານ ຊຶ່ງບັນດາບົດຄົ້ນຄວ້າວິທະຍາດຕ່າງໆ

ເຫຼົ່ານັ້ນ ລ້ວນແລ້ວແຕ່ມີຄຸນຄ່າ ແລະ ເປັນຂໍ້ມູນອັນສຳຄັນ ຮັບໃຫ້ແກ່ການຮຽນ-ການສິດສອນ ຂອງພະນັກງານ, ນັກສຶກສາຜູ້ທີ່ມີຄວາມສົນໃຈ ແລະ ພາກສ່ວນອື່ນໆ ຊຶ່ງມັນສະແດງອອກຄື ສະມາຊິກຊາວໜຸ່ມໃນຂົງເຂດຄູ-ອາຈານ ທີ່ເຮັດໜ້າທີ່ໃນການສິດສອນ, ຄົ້ນຄວ້າວິ ທະຍາສາດ ຢູ່ ສມປຊ ມີທັງໝົດຈຳນວນ 47 ສະຫາຍ, ຍິງ 22 ສະຫາຍ ຊຶ່ງເປັນກຳລັງແຮງອັນສຳຄັນ ໃນການປະຕິບັດໜ້າທີ່ການເມືອງຂອງສະຖາບັນ. ໃນໄລຍະຜ່ານມາ ດ້ວຍຄວາມເອົາໃຈໃສ່ຂອງຄະນະພັກ, ຄະນະນຳ ແລະ ຄະນະຕ່າງໆ ໄດ້ເຮັດໃຫ້ຄຸນແຖວພະນັກງານ, ຄູ-ອາຈານໜຸ່ມ ນັບມື້ນັບເຕີບໃຫຍ່ເຂັ້ມແຂງຂຶ້ນ, ເອົາໃຈໃສ່ຄົ້ນຄວ້າປັບປຸງເນື້ອໃນບົດສອນ, ຂຶ້ນຫ້ອງສິດສອນໃນລະບົບຮຽນຕ່າງໆ ດ້ວຍຄວາມເປັນເຈົ້າການ ຊຶ່ງສາມາດປະຕິບັດຊົ່ວໂມງສອນ, ເປັນກຳມະການສອບເສັງໄດ້ທັງໝົດ ຈຳນວນ 17,319 ຊົ່ວໂມງ, ແນະນຳບົດປ້ອງກັນຈົບຊັ້ນ ສຳເລັດ 260 ຫົວຂໍ້, ປະກອບສ່ວນຂຽນປຶ້ມຕຳລາຮຽນໄດ້ຈຳນວນ 20 ວິຊາ. ຜ່ານການຄົ້ນຄວ້າຂຶ້ນຫ້ອງສິດ ສອນ ຂອງພະນັກງານ, ຄູ-ອາຈານ ໜຸ່ມ ເຮັດໃຫ້ຄຸນແຖວຄູໜຸ່ມສາມາດຂໍຕຳແໜ່ງວິຊາການຄູຕ່າງໆ ໄດ້ຄື “ປັດຈຸບັນສະມາຊິກຊາວໜຸ່ມທີ່ເປັນຄູສອນ ໄດ້ຮັບແຕ່ງຕັ້ງຕຳແໜ່ງວິຊາການຄູທັງໝົດຈຳນວນ 24 ສະຫາຍ, ຍິງ 13 ສະຫາຍ, ໃນນັ້ນ ຕຳແໜ່ງອາຈານ ມີ 5 ສະຫາຍ, ຍິງ 1 ສະຫາຍ, ຜູ້ຊ່ວຍອາຈານ 20 ສະຫາຍ, ຍິງ 12 ສະຫາຍ” (ກົມຄຸ້ມຄອງການຄົ້ນຄວ້າວິທະຍາສາດ, 2025) ແລະ ກຳລັງສະເໜີຂໍຕຳແໜ່ງວິຊາການຄູຂັ້ນຮອງສາດສະດາຈານ ຈຳນວນ 1 ສະຫາຍ ເປັນຊາຍ.

ນອກຈາກການຄົ້ນຄວ້າວິທະຍາສາດແລ້ວ ຊາວໜຸ່ມພວກເຮົາ ໄດ້ເປັນເຈົ້າການຢ່າງຕັ້ງໜ້າໃນການບຸກບືນ, ສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ເພື່ອພ້ອມກັນເຮັດໜ້າທີ່ການເມືອງຕາມການມອບໝາຍ ຂອງພັກ-ລັດ ຈາກຜົນງານການເຄື່ອນໄຫວດັ່ງກ່າວນັ້ນ ສະມາຊິກຊາວໜຸ່ມໄດ້ຜ່ານການຄັດເລືອກ ແລະ ໄດ້ຮັບການຍ້ອງຍໍຊົມເຊີຍຈາກສະຖາບັນ, ຈາກການຈັດຕັ້ງຊາວໜຸ່ມ ແລະ ຈາກລັດຖະບານ ຄື: ຍ້ອງຍໍເປັນອາຈານສອນດີ-ສອນເກັ່ງ ຄື: ປະເພດ I ຈຳນວນ 35 ສະຫາຍ, ຍິງ 5 ສະຫາຍ; ປະເພດ II ຈຳນວນ 11 ສະຫາຍ, ຍິງ 4 ສະຫາຍ ແລະ ປະເພດ III ຈຳນວນ 25 ສະຫາຍ, ຍິງ 7 ສະຫາຍ. ນັກສຶກສາ ຮຽນເກັ່ງ-ມີວິໄນດີ: ປະເພດ I ຈຳນວນ 43 ສະຫາຍ, ຍິງ 13 ສະຫາຍ; ປະເພດ II ຈຳນວນ 147 ສະຫາຍ, ຍິງ 41ສະຫາຍ ແລະ ປະເພດ III ຈຳນວນ 129 ສະຫາຍ, ຍິງ 46 ສະຫາຍ.

ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ຈຳນວນ 1 ສະຫາຍ, ຊັ້ນ III ຈຳນວນ 2 ສະຫາຍ; ຫຼຽນກາແຮງງານ ຈຳນວນ 2 ສະຫາຍ, ຍິງ 2 ສະຫາຍ; ໃບຍ້ອງຍໍລັດຖະບານຈຳນວນ 13 ສະຫາຍ, ຍິງ 2 ສະຫາຍ, ຫຼຽນກາລະນຶກ 65 ປີ ຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຈຳນວນ 114 ສະຫາຍ, ຍິງ 53 ສະຫາຍ, ຍ້ອງຍໍຈາກສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ສສ. ຫວຽດນາມ ປະເພດຫຼຽນກາມິດຕະພາບ ຈຳນວນ 4 ສະຫາຍ, ຍິງ 2 ສະຫາຍ; ຂັ້ນສະຖາບັນຍ້ອງຍໍປະເພດ I ຈຳນວນ 140 ສະຫາຍ, ຍິງ 33 ສະຫາຍ; ປະເພດ II ຈຳນວນ 61 ສະຫາຍ, ຍິງ 37 ສະຫາຍ; ປະເພດ III ຈຳນວນ 17 ສະຫາຍ, ຍິງ15 ສະຫາຍ ແລະ ໄດ້ຮັບການຍ້ອງຍໍຈາກສະຖາບັນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຕະຫຼອດໄລຍະ 5 ປີ (2015-2020) ຈຳນວນ 20 ສະຫາຍ, ຍິງ 7 ສະຫາຍ.

ຄຽງຄູ່ກັບຜົນງານດ້ານຕັ້ງໜ້າໃນການຄົ້ນຄົ້ນຄວ້າວິທະຍາສາດ ຂອງຊາວໜຸ່ມ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໃນໄລຍະຜ່ານມາ ເຖິງແມ່ນວ່າຈະມີຜົນສຳເລັດໃນຫຼາຍດ້ານກໍ່ຕາມ, ແຕ່ກໍ່ປາສະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງ ທີ່ຍັງເປັນບັນຫາຕັ້ງຂຶ້ນຈຳນວນໜຶ່ງ ທີ່ຈະຕ້ອງໄດ້ພ້ອມກັນປັບປຸງແກ້ໄຂໃນຕໍ່ໜ້າ ຄື:

1). ການຄົ້ນຄວ້າວິທະຍາສາດ ຂອງຊາວໜຸ່ມ ຍັງເຮັດບໍ່ທັນແຂງແຮງ ຊຶ່ງວ່າຈະມີຫຼາຍຫົວຂໍ້ທີ່ໄດ້ຮັບມອບໝາຍ ແຕ່ຜົນສຳເລັດຍັງຊັກຊ້າບໍ່ທັນຕາມກຳນົດເວລາ, ເນື້ອໃນບໍ່ທັນຮັບປະກັນທາງດ້ານວິທະຍາສາດ, ຍັງບໍ່ທັນໂດດເດັ່ນເທົ່າທີ່ຄວນ ແລະ ຍັງບໍ່ທັນເປັນຂະບວນຟົດຟື້ນ.

2). ຊາວໜຸ່ມບາງສະຫາຍ ຍັງຂາດການຍົກລະດັບຄວາມຮູ້, ຄວາມສາມາດ, ເຕັກນິກ, ວິທະຍາສາດ ຍັງໜ້ອຍ, ການຊອກຮູ້ຮໍ່າຮຽນຍັງຈຳກັດ, ມີແຕ່ເອື່ອຍອີງ, ຄອງຄອຍນຳແຕ່ການຈັດຕັ້ງຂັ້ນເທິງ ຈຶ່ງເຮັດໃຫ້ຄວາມຮູ້ຄວາມສາມາດ ບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການໃນໄລຍະໃໝ່ ສະແດງອອກການຄົ້ນຄວ້າ, ຊອກອ່ານ, ຂຽນປຶ້ມ, ຕຳລາ, ບົດວາລະສານ ແລະ ບົດວິທະຍາສາດ ຍັງເຮັດໄດ້ໜ້ອຍ.

3). ຂະບວນການແຂ່ງຂັນການຄົ້ນຄວ້າວິທະຍາສາດ ຂອງຊາວໜຸ່ມ ຍັງບໍ່ທັນແຂງແຮງ, ຍັງບໍ່ທັນຟົດຟື້ນ, ບໍ່ຕໍ່ເນື່ອງ ແລະ ບໍ່ທັນປຸກລະດົມໃຫ້ສະມາຊິກຊາວໜຸ່ມ ເຂົ້າຮ່ວມຢ່າງກວ້າງຂວາງ; ການເຄື່ອນໄຫວບໍ່ທັນມີຫຼາຍຮູບຫຼາຍສີ, ເນື້ອໃນການເຄື່ອນໄຫວບໍ່ທັນອຸດົມຮັ່ງມີ ເພື່ອດຶງດູດຄຸນແຖວຊາວໜຸ່ມເຂົ້າຮ່ວມຢ່າງແຜ່ຫຼາຍໄດ້. ສະນັ້ນ, ເຮັດໃຫ້ບົດບາດຂອງຊາວໜຸ່ມ ແລະ ການນຳໃຊ້ທ່າແຮງ ຫຼື ຄຸນປະໂຫຍດຈາກຄວາມຄິດຂອງຊາວໜຸ່ມຖືກຈຳກັດ.

4). ການຂຽນບົດວາລະສານ, ບົດວິທະຍາສາດອື່ນໆ ສ່ວນໃຫຍ່ໄດ້ແຕ່ປະລິມານ, ຄຸນນະພາບຍັງບໍ່ທັນສູງ, ເນື້ອໃນຍັງຈຳກັດຢູ່

ບາງຂົງເຂດ, ບໍ່ທັນຮັບປະກັນໄດ້ລັກສະນະວິທະຍາສາດ, ຍັງບໍ່ທັນກຳໄດ້ຂອດ, ຂັ້ນຕອນ, ບາດກ້າວຂອງການຂຽນບົດ, ເນື້ອໃນສ່ວນຫຼາຍບໍ່ທັນພົວພັນກັບວຽກງານ ຫຼື ຜົນປະໂຫຍດຂອງຊາວໜຸ່ມ ເທົ່າທີ່ຄວນ ເຮັດໃຫ້ບໍ່ມີຄວາມພົ້ນເດັ່ນ.

5). ການເຜີຍແຜ່, ຝຶກອົບຮົມວິທີວິທະຍາໃນການຄົ້ນຄວ້າ, ຂຽນບົດວາລະສານ ແລະ ຂຽນບົດວິທະຍາສາດຕ່າງໆ ໃຫ້ຊາວໜຸ່ມຍັງຈຳກັດ ຈຶ່ງເຮັດໃຫ້ສະມາຊິກຊາວໜຸ່ມຈຳນວນໜຶ່ງ ບໍ່ທັນກຳໄດ້ບາດກ້າວຂັ້ນຕອນຂອງການຂຽນບົດວາລະສານ ແລະ ບົດວິທະຍາສາດ ເຮັດໃຫ້ສະມາຊິກຊາວໜຸ່ມຈຳນວນໜຶ່ງ ເວລາຂຽນບົດບໍ່ຮູ້ຈະເລີ່ມຈາກຈຸດໃດ, ເວລາຂຽນໄປແລ້ວໄດ້ປັບປຸງຫຼາຍຄັ້ງ.

ເພື່ອເຮັດໃຫ້ບົດບາດຂອງຊາວໜຸ່ມ ໃນການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ນັບມື້ນັບພົ້ນເດັ່ນ ແລະ ມີຄຸນນະພາບສູງ ຮັບປະກັນໄດ້ຫຼັກວິທະຍາສາດ, ຕາມທັດສະນະຂອງຜູ້ຂຽນແລ້ວ ເຫັນຄວນວ່າຕ້ອງໄດ້ເອົາໃຈໃສ່ຕື່ມບັນຫາທີ່ສຳຄັນ ຄື:

1). ເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະບໍລິຫານງານຊາວໜຸ່ມ ເພື່ອເຮັດໃຫ້ສະມາຊິກຊາວໜຸ່ມ ໄດ້ປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດໃຫ້ນັບມື້ນັບຫຼາຍຂຶ້ນ, ສ້າງໃຫ້ສະມາຊິກຊາວໜຸ່ມມີການແຂ່ງຂັນກັນໃນການຄົ້ນຄວ້າຂຽນບົດວາລະສານຕ່າງໆ.

2). ເພີ່ມທະວີການກະຕຸກຊຸກຍູ້ ເພື່ອເຮັດໃຫ້ສະມາຊິກຊາວໜຸ່ມມີການແຂ່ງຂັນກັນຂຽນບົດວາລະສານຕ່າງໆ ເຊັ່ນວ່າມີການຍ້ອງຍໍຕົວເດັ່ນໃນການຄົ້ນຄວ້າຂຽນບົດວາລະສານ, ບົດວິທະຍາສາດ ຂອງສະມາຊິກຊາວໜຸ່ມປະຈຳປີ ເພື່ອເປັນການກະຕຸກຊຸກຍູ້ໃຫ້ສະມາຊິກຊາວໜຸ່ມ ມີຄວາມກະຕືລືລົ້ນ ແລະ ແຂ່ງຂັນກັນໃນການຄົ້ນຄວ້າຂຽນບົດວາລະສານ ໃຫ້ນັບມື້ນັບຫຼາຍຂຶ້ນ.

3). ເພີ່ມທະວີການຊຸກຍູ້, ສົ່ງເສີມ ໃຫ້ຄູ-ອາຈານໜຸ່ມ ໄດ້ປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດ ເປັນຕົ້ນແມ່ນການເຂົ້າຮ່ວມຂຽນປຶ້ມຕຳລາ, ປຶ້ມແບບຮຽນ, ຂຽນບົດລົງວາລະສານ, ເຂົ້າຮ່ວມໂຄງການຄົ້ນຄວ້າວິທະຍາສາດລະດັບຊາດ, ລະດັບສະຖາບັນ, ຄົ້ນຄວ້າບົດຮຽນການພັດທະນາຊາວໜຸ່ມ ສ້າງໂຄງການຮ່ວມມືກັບຄະນະຊາວໜຸ່ມ ຂອງສະຖາບັນຄົ້ນຄວ້າວິທະຍາສາດ ທັງພາຍໃນ ແລະ ພາຍນອກ ໃຫ້ນັບມື້ນັບຫຼາຍຂຶ້ນ.

4). ເພີ່ມທະວີໃຫ້ຄວາມສຳຄັນຕໍ່ການຄົ້ນຄວ້າໃຫ້ຫຼາຍຂຶ້ນ ໂດຍສະເພາະເອົາໃຈໃສ່ບຳລຸງ-ກໍ່ສ້າງຖັນແຖວນັກວິທະຍາສາດໜຸ່ມທີ່ມີພອນສະຫວັນ, ມີພອນສະແຫວງ ໃຫ້ເຂົ້າສູ່ລວງເລິກດ້ວຍຫຼາຍວິທີການຍົກລະດັບຄວາມຮັບຮູ້-ຄວາມສາມາດ ໂດຍການໃຫ້ໂອກາດຊາວໜຸ່ມໄດ້ພັດທະນາຄວາມຮູ້ຄວາມສາມາດຂອງຕົນເອງ ເພື່ອຄົ້ນຫາຜູ້ທີ່ພົ້ນເດັ່ນ ແລະອື່ນໆ.

5). ເພີ່ມທະວີການຝຶກອົບຮົມວິທີວິທະຍາ ໃນການຄົ້ນຄວ້າຂຽນບົດວາລະສານ, ບົດຄົ້ນຄວ້າວິທະຍາສາດຕ່າງໆ ໃຫ້ແກ່ສະມາຊິກຊາວໜຸ່ມ ໃນຂົງເຂດວຽກງານຕ່າງໆ ເພື່ອເຮັດໃຫ້ສະມາຊິກຊາວໜຸ່ມສາມາດກຳໄດ້ວິທີວິທະຍາ ແລະ ຂັ້ນຕອນຂອງການຂຽນບົດ.

ສະຫຼຸບລວມ ການເພີ່ມທະວີບົດບາດຊາວໜຸ່ມໃນການຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນການຍົກສູງບົດບາດໃຫ້ຊາວໜຸ່ມ ໄດ້ມີໂອກາດປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດ ເພື່ອສ້າງໃຫ້ບົດບາດຂອງຊາວໜຸ່ມນັບມື້ນັບສູງເດັ່ນຂຶ້ນ; ຍົກສູງບົດບາດ ແລະ ຄວາມສາມາດ, ປຸກລະດົມຊາວໜຸ່ມເຂົ້າຮ່ວມຂະບວນການວິທະຍາສາດໃຫ້ຫຼາຍ ທັງມອບໝາຍ ແລະ ເປີດກວ້າງ ເພື່ອຊອກ ແລະ ສ້າງໄດ້ຖັນແຖວນັກວິທະຍາສາດໜຸ່ມໃນອະນາຄົດ.

ເອກະສານອ້າງອີງ

ກົມມະສິດ, ສ. (2025). *ບົດຄຳເຫັນ ຕໍ່ກອງປະຊຸມເຜີຍແຜ່ຜົນການຄົ້ນຄວ້າ ປະຈຳປີ 2024*, ໃນລະຫວ່າງວັນທີ 30-31 ມັງກອນ 2025.

ກົມຄຸ້ມຄອງການຄົ້ນຄວ້າວິທະຍາສາດ. (2025). *ເອກະສານສະຖິຕິຕຳແໜ່ງວິຊາການຄູ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.*

ກອງປະຊຸມໃຫຍ່ ຄັ້ງທີ V ຂອງຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ. (2024). *ບົດລາຍງານການເມືອງ ຂອງຄະນະບໍລິຫານງານຊາວໜຸ່ມ ສມປຊ ສະໄໝທີ IV ຕໍ່ກອງປະຊຸມໃຫຍ່ຜູ້ຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຄັ້ງທີ V*, ວັນທີ 27 ທັນວາ 2024.

ຄະນະໂຄສະນາອົບຮົມສູນກາງພັກ. (1986). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ*, ໂຮງພິມແຫ່ງລັດ.

ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ. (2021). *ປຶ້ມຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ, ປີ 2021-2030.*

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ. (2020). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ*, ໂຮງພິມແຫ່ງລັດ.

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ. (2005). *ວາລະສານ ທິດສະດີການເມືອງ-ການປົກຄອງ ສະບັບພິເສດ*, ເດືອນ

ມັງກອນ ປີ 2005.

ພົມວິຫານ, ກ. (n.d.). *ບົດໂອ້ລົມ ກ່າວໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມລາວຮັກຊາດ ອ້ອມຂ້າງສູນກາງ ເທື່ອທີ II*.

ພົມວິຫານ, ກ. (1987). *ນິພົນເລືອກເຟັ້ນ ເຫຼັ້ມ 2*, ສຳນັກພິມຈຳໜ່າຍ ສປປ ລາວ.

ພົມວິຫານ, ກ. (1985). *ນິພົນເລືອກເຟັ້ນ ເຫຼັ້ມ 1*, ສຳນັກພິມຈຳໜ່າຍ ສປປ ລາວ.

ພົມວິຫານ, ກ. (1983). *ຊາວໜຸ່ມຈົ່ງເປັນດັ່ງນິກອິນຊີທີ່ບໍ່ຫວັ່ນກົວຕໍ່ພະຍຸລົມແຕ, ຈົ່ງກາຍເປັນສິນໄຊຂອງຍຸກສະໄໝພວກເຮົາ*.

ມັງໜໍ່ເມກ, ທ. (2014). *ບາງບັນຫາ ກ່ຽວກັບການຄົ້ນຄວ້າວິທະຍາສາດ*.

ລາວມົວຊິ໋ງ, ມ. (2024). *ບົດໂອ້ລົມ ຕໍ່ກອງປະຊຸມໃຫຍ່ ສະມາຊິກຊາວໜຸ່ມ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຄັ້ງທີ V*, ໃນວັນທີ 26 ທັນວາ 2024.

ວາລະສານອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ*, ໂຮງພິມແຫ່ງລັດ.

ໂຮ່ຈິມິນ. (2006). *ແນວຄິດ ກ່ຽວກັບ ພາລະກິດປ່ຽນແປງໃໝ່*, ສຳນັກພິມ ຂ່າວສານປະເທດລາວ.